# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 20 ພຶສຈິກາ 2022 (11-20-2022)

---

## ຕິດຕໍ່ສື່ສານພຣະຄຳຂອງພຣະເຈົ້າ

*ແມ່ນເຣື່ອງຫຍັງທີ່ທ່ານມັກຈະບອກເລົ່າໃຫ້ຄົນອື່ນໆຟັງ?*

**ຈຸດສຳຄັນໃນບົດຮຽນ:** ຄວາມຮູ້ກ່ຽວກັບພຣະຄຳຂອງພຣະເຈົ້າບໍ່ຄວນປິດອຳໄວ້ສຳລັບຕົວທ່ານເອງ, ຕ້ອງສົ່ງຕໍ່.

**ພຣະຄັມພີຕອບສນອງຊີວິດ.**

ຂ້າພະເຈົ້າຕ້ອງເດີນທາງດ້ວຍເຄື່ອງບິນຢູ່ເລື້ອຍໆ, ດັ່ງນັ້ນຂ້າພະເຈົ້າຈຶ່ງຄຸ້ນເຄີຍກັບການໄດ້ຍິນພະນັກງານບໍຣິການໃນເຄື່ອງບິນປະກາດການຕຽມຕົວອອກເດີນທາງຂອງເຄື່ອງບິນທີ່ຈະບິນຂຶ້ນໄປນັ້ນ. ໃຜກໍຕາມທີ່ໄດ້ບິນກໍໄດ້ຍິນພະນັກງານບໍຣິການແຈ້ງລາຍງານເສັ້ນທາງການບິນ, ບອກວິທີການຮັກສາຄວາມປອດພັຍທັງໝົດຂອງເຄື່ອງບິນ, ແລະສິດສອນທ່ານໃຫ້ຄາດສາຍແອວປ້ອງກັນພັຍຂອງທ່ານ. ພະນັກງານຈະແນະນຳທ່ານວ່າຈະຕ້ອງເຮັດແນວໃດໃນກໍລະນີທີ່ມີການປ່ຽນແປງໃນຫ້ອງໂດຍສານຖືກກົດດັນ. ໃນກໍລະນີທີ່ບໍ່ໜ້າຈະເປັນໄປໄດ້, ໜ້າກາກຈະຢ່ອນລົງມາຈາກພື້ນທີ່ບ່ອນເກັບມ້ຽນເຄື່ອງຂ້າງເທິງ. ກ່ອນອື່ນໝົດທ່ານຕ້ອງສວມໃສ່ໜ້າກາກຂອງທ່ານເອງກ່ອນໆທີ່ທ່ານຈະໄປຊ່ວຍຄົນອື່ນໃສ່ໜ້າກາກຂອງເຂົາ. ບົດຮຽນນີ້ແມ່ນງ່າຍດາຍ: ທ່ານບໍ່ສາມາດຊ່ວຍຄົນອື່ນໄດ້ດີຖ້າທ່ານບໍ່ສາມາດເບິ່ງແຍງຕົວເອງກ່ອນ.

ອັນນີ້ແມ່ນຮູບພາບທີ່ເປັນປໂຍດຂອງສິ່ງທີ່ປະກອບໃນການບອກຄົນອື່ນໆກ່ຽວກັບພຣະຄຳຂອງພຣະເຈົ້າ. ພວກເຮົາທຸກຄົນຮູ້ຈັກຄົນອື່ນທີ່ສາມາດຮັບເອົາສິ່ງດີມີປໂຍດຕໍ່ຊີວິດຈາກພຣະຄັມພີ, ແຕ່ຕົວພວກເຮົາເອງບໍ່ສາມາດຊ່ວຍຄົນອື່ນໃຫ້ເຂົ້າໃຈພຣະຄຳຂອງພຣະເຈົ້າຖ້າຫາກພວກເຮົາບໍ່ສຶກສາຮຽນຮູ້ພຣະຄຳໃຫ້ດີກ່ອນ. ແຕ່ເມື່ອເຮົາຮັບເອົາການຮຽນຮູ້ພຣະຄຳຂອງພຣະເຈົ້າເຮົາກໍສາມາດແບ່ງປັນຄວາມຈິງກັບຄົນອື່ນໄດ້, ນີ້ຄືຄວາມຈິງ, ໃນຂນະທີ່ພວກເຮົາມີຄວາມຮູ້ຄວາມເຂົ້າໃຈແລະເຕີບໃຫ່ຽໃນພຣະຄັມພີ, ພວກເຮົາກໍຈະມີຄວາມກະຕືລືລົ້ນຢາກຈະແບ່ງປັນພຣະຄຳນີ້ໃຫ້ກັບຄົນອື່ນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3)

<u>**ສຶກສາພຣະຄັມພີ**</u>

### 1. ພຣະບັນຍັດສອງ 6:1-3

*1. ຕໍ່ໄປນີ້ແມ່ນກົດບັນຍັດ ພຣະທຳ ແລະຣີດຄອງປະເພນີທັງໝົດທີ່ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າສອນພວກທ່ານ ສະນັ້ນເມື່ອພວກທ່ານຢູ່ໃນແຜ່ນດິນທີ່ກຳລັງຈະເຂົ້າຍຶດຄອງນັ້ນ ຈົ່ງໄດ້ເຮັດຕາມພຣະຄຳເຫລົ່ານີ້. 2. ທ່ານກັບພວກລູກຫລານຂອງທ່ານຈະຕ້ອງຢຳເກງພຣະຜູ້ເປັນເຈົ້າຈົນຕລອດຊີວິດ ແລະປະພຶດຕາມພຣະທຳທັງໝົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກທ່ານທັງຫລາຍແລ້ວນັ້ນ ເພື່ອວ່າພວກທ່ານຈະມີອາຍຸໝັ້ນຍືນ. 3. ຊາວອິສຣາເອັນເອີຍ ຈົ່ງສະດັບຮັບຟັງພຣະທຳ ແລະປະພຶດຕາມເທີ້ນ ເພື່ອກິຈການທຸກຢ່າງຂອງພວກທ່ານຈະລຸລ່ວງໄປດ້ວຍດີ ແລ້ວພວກທ່ານກໍຈະກາຍເປັນຊົນຊາດໃຫຍ່ຢູ່ໃນແຜ່ນດິນທີ່ອຸດົມສົມບູນເໝືອນຢ່າງພຣະຜູ້ເປັນເຈົ້າແຫ່ງບັນພະບູລຸດຂອງພວກທ່ານທັງຫລາຍໄດ້ຊົງສັນຍາໄວ້.*

ສີ່ສິບປີກ່ອນໜ້ານີ້, ພຣະເຈົ້າໄດ້ຊ່ວຍຊາວອິສຣາເອັນອອກຈາກການເປັນທາດຂອງອີຢີບຢ່າງອັສຈັນ. ພຣະອົງໃຫ້ຄຳໝັ້ນສັນຍາອັນໜ້າເຊື່ອຖືແກ່ພວກເຂົາເຊິ່ງລວມເຖິງຄຳສັນຍາທີ່ຈະນຳພາໄປອາສັຍຢູ່ໃນແຜ່ນດິນທີ່ໄດ້ຊົງສັນຍາໄວ້ກັບອັບຣາຮາມ. ພຣະອົງຍັງໄດ້ໃຫ້ຄຳສັ່ງຂອງພຣະອົງ-ຄຳສັ່ງທີ່ຊົງໃຫ້ເຊື່ອຟັງຄຳສັນຍາທີ່ບໍ່ໜ້າເຊື່ອຂອງພຣະອົງ. ແຕ່ໃນໄລຍະສີ່ສິບປີຂອງພວກເຂົາທີ່ຢູ່ໃນຖິ່ນແຫ້ງ

ແລ້ງກັນດານ. ຊາວອິສຣາເອັນມັກຈະບໍ່ເຊື່ອຟັງແລະໄວ້ວາງໃຈ. ແຕ່ລະຄັ້ງທີ່ຊາວອິສຣາເອັນລົ້ມເຫຼວ, ພຣະເຈົ້າໄດ້ເພີ້ມພຣະຄຸນຄວາມເມດຕາ. ການບໍ່ເຊື່ອຟັງແລະຄວາມບໍ່ໄວ້ວາງໃຈຂອງຊາວອິສຣາເອັນແມ່ນເປັນການຕໍ່ສູ້ພື້ນຖານທີ່ຈະເຊື່ອວ່າວິທີການຂອງພຣະເຈົ້າແມ່ນດີທີ່ສຸດຫຼືວ່າພຣະເຈົ້າຈະເຮັດຕາມທີ່ພຣະອົງໄດ້ສັນຍາໄວ້. ໃນພຣະບັນຍັດສອງບົດ 6 ໂມເຊ ພະຍາຍາມກະຕຸ້ນຊາວອິສຣາເອັນໃຫ້ເຂົ້າໃຈປະໂຍດຂອງການເຊື່ອຟັງພຣະຄຳຂອງພຣະເຈົ້າ. ຫຼາຍພັນປີຕໍ່ມາ, ຍັງມີຜົນປະໂຍດອັນໃຫ່ຍຫຼວງໃນການເຊື່ອຟັງຄຳຂອງພຣະເຈົ້າ. ຄຳເວົ້າຂອງໂມເຊໃນພຣະຄຳພີແມ່ນຊີ້ໃຫ້ເຫັນຢ່າງຈະແຈ້ງ: ຈົ່ງປະຕິບັດຕາມຄຳສັ່ງຂອງພຣະເຈົ້າ. ໂມເຊສະແດງໃຫ້ເຮົາເຫັນຜົນປະໂຍດສາມເທົ່າທີ່ຈະເຊື່ອຟັງພຣະຄຳຂອງພຣະເຈົ້າ.

1. **ການເຊື່ອຟັງເຮັດໃຫ້ເຮົາຢຳເກງພຣະເຈົ້າ.** ໂມເຊກ່າວວ່າການເຊື່ອຟັງພຣະຄຳຂອງພຣະເຈົ້າ "ເພື່ອວ່າເຈົ້າຈະຢຳເກງພຣະຜູ້ເປັນເຈົ້າຜູ້ເປັນພຣະເຈົ້າຂອງເຈົ້າຕລອດຊີວິດຂອງເຈົ້າ"(ຂໍ້ 2). ໂດຍທົ່ວໄປແລ້ວປະໂຍກທີ່ວ່າ ຢຳເກງພຣະຜູ້ເປັນເຈົ້າແມ່ນໝາຍເຖິງ "ຄວາມເຄົາລົບ." ພຣະຄຳຂອງພຣະເຈົ້າເປີດເຜີຍວ່າພຣະອົງເປັນໃຜ, ແລະເມື່ອພວກເຮົາຄົ້ນພົບແລະປະຕິບັດຕາມທຸກສິ່ງທີ່ພວກເຮົາຮຽນຮູ້ກ່ຽວກັບພຣະອົງ, ພວກເຮົາເຄົາລົບພຣະອົງ. ດັ່ງນັ້ນ, ຄວາມຢຳເກງແມ່ນການປະພຶດທີ່ສລາດ.
2. **ການເຊື່ອຟັງນຳໄປສູ່ພຣະພອນຂອງພຣະເຈົ້າຕໍ່ຊີວິດຂອງພວກເຮົາ.** ໂມເຊໄດ້ກ່າວວ່າຈະຮັກສາ "ກົດບັນຍັດແລະຂໍ້ຄຳສັ່ງຂອງພຣະເຈົ້າ… ເພື່ອວ່າເຈົ້າຈະມີຊີວິດອັນຍາວນານ,… ເພື່ອເຈົ້າຈະໄດ້ຮັບຄວາມຈະເຣີນຮຸ່ງເຮືອງແລະເພີ້ມທະວີຄູນຫຼາຍຂຶ້ນ." ແລະເພາະວ່າພຣະເຈົ້າ "ໄດ້ສັນຍາວ່າແຜ່ນດິນຂອງເຈົ້າຈະອຸດົມສົມບູນໄປດ້ວຍນ້ຳນົມແລະນ້ຳເຜີ້ງ." ສຳລັບອິສຣາເອັນ, ພຣະພອນຂອງພຣະເຈົ້າແມ່ນທັງທາງຝ່າຍຈິດວິນຍານແລະຝ່າຍຮ່າງກາຍ. ບໍ່ວ່າເຮົາຈະຮູ້ສຶກເຖິງພຣະພອນຂອງພຣະເຈົ້າທາງຝ່າຍຮ່າງກາຍຫຼືບໍ່, ພວກເຮົາແມ່ນໄດ້ຮັບ-ແລະພວກເຮົາໄດ້ຮັບພຣະພອນທາງຝ່າຍຈິດວິນຍານຢ່າງແນ່ນອນ. "ສາທຸການແດ່ພຣະເຈົ້າ ຄືພຣະບິດາຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ ຜູ້ໄດ້ຊົງໂຜດປະທານພຣະພອນທຸກປະການຝ່າຍວິນຍານ ໃຫ້ແກ່ເຮົາທັງຫລາຍໃນສວັນສະຖານໂດຍພຣະຄຣິດ. (ເອເຟໂຊ 1:3).
3. **ການເຊື່ອຟັງນຳໄປສູ່ການໃຫ້ພອນຂອງພຣະເຈົ້າສຳລັບຄົນອື່ນ.** ໂມເຊຕັ້ງໃຈໃຫ້ຊາວອິສຣາເອັນເຮັດຕາມຄຳສັນຍາຂອງພຣະເຈົ້າຕໍ່ຄົນລຸ້ນຕໍ່ໆມາ. ໃນທີ່ນີ້ພວກເຮົາໄດ້ຮຽນຮູ້ຄວາມຈິງທີ່ສຳຄັນ: ພຣະເຈົ້າບໍ່ເຄີຍຕັ້ງໃຈໃຫ້ພຣະພອນຂອງພຣະອົງຢຸດຢູ່ກັບພວກເຮົາ, ພຣະອົງປາຖນາໃຫ້ພວກເຮົາເປັນພອນໃຫ້ກັບຄົນອື່ນ. ແລະບໍ່ມີວິທີທີ່ດີກ່ວາທີ່ຈະໃຫ້ພອນນອກຈາກການຫວ່ານພຣະຄຳຂອງພຣະເຈົ້າດ້ວຍການເຊື່ອຟັງຂອງພວກເຮົາເອງ. ການເຊື່ອຟັງຂອງພວກເຮົາສາມາດກະຕຸ້ນໃຫ້ຄົນອື່ນຕັດສິນໃຈເຊື່ອພຣະເຢຊູຄຣິດແລະຕິດຕາມພຣະອົງດ້ວຍການເຊື່ອຟັງ.

## 2. ພຣະບັນຍັດສອງ 6:4-5.

*4. ອິສຣາເອັນເອີຍ ຈົ່ງຟັງເທີ້ນ ພຣະຜູ້ເປັນເຈົ້າອົງດຽວເທົ່ານັ້ນທີ່ເປັນພຣະເຈົ້າຂອງເຮົາ. 5. ຈົ່ງຮັກພຣະຜູ້ເປັນເຈົ້າໃຫ້ສຸດຈິດສຸດໃຈແລະສຸດກຳລັງຂອງທ່ານ.*

ດັ່ງທີ່ພວກເຮົາໄດ້ສັງເກດເຫັນແລ້ວ, ແຫຼ່ງຄົງທີ່ຂອງການບໍ່ເຊື່ອຟັງແລະຄວາມບໍ່ໄວ້ວາງໃຈຂອງຊາວອິສຣາເອັນແມ່ນການຕໍ່ສູ້ພື້ນຖານທີ່ຈະເຊື່ອວ່າວິທີການຂອງພຣະເຈົ້າແມ່ນດີທີ່ສຸດຫຼືວ່າພຣະເຈົ້າພຽງແຕ່ເຮັດຕາມທີ່ພຣະອົງຊົງສັນຍາ. ຄວາມເຄັ່ງຕຶງລະຫ່ວາງຄວາມລົ້ມເຫຼວຂອງອິສຣາເອັນແລະຄວາມສັດຊື່ຂອງພຣະເຈົ້າໄດ້ເຮັດໃຫ້ຄວາມສຳພັນລະຫ່ວາງຊາວອິສຣາເອັນກັບພຣະເຈົ້າເກີດຂຶ້ນ. ແຕ່ພຣະເຈົ້າໃຫ້ຄວາມເມດຕາແລະສັດຊື່ຂອງພຣະອົງບໍ່ໜີໄປຈາກໄພ່ພົນຂອງພຣະອົງ. ພວກເຮົາອາດພະຍາຍາມທີ່ຈະເຊື່ອຟັງຄຳສັນຍາຂອງພຣະເຈົ້າຫຼືເຊື່ອຟັງຄຳສັ່ງຂອງພຣະອົງ. ພວກເຮົາກໍສາມາດພົບເຫັນຕົວເອງໄດ້ຢ່າງງ່າຍດາຍໃນທາງຄົບແຫ່ງຄວາມເຊື່ອ. ຂອບຄຸນພຣະເຈົ້າ, ຄືກັບທີ່ພຣະເຈົ້າຊົງເມດຕາຕໍ່ຊາວອິສຣາເອັນ, ສະນັ້ນພຣະອົງຈຶ່ງຊົງສະແດງພຣະຄຸນຂອງພຣະອົງຕໍ່ພວກເຮົາຜູ້ທີ່ເປັນຜູ້ເຊື່ອພຣະກິດຕິຄຸນຂ່າວປະເສີດຂອງພຣະເຢຊູຢ່າງຕໍ່ເນື່ອງ. ໃນທີ່ນີ້ພວກເຮົາພົບເຫັນແຮງຈູງໃຈສູງສຸດຂອງພວກເຮົາທີ່ຈະສືບຕໍ່ໄວ້ວາງໃຈແລະເຊື່ອຟັງພຣະອົງ. ຄວາມຮັກຂອງພຣະເຈົ້າໄດ້ສແວງຫາພວກເຮົາຢ່າງບໍ່ຢຸດຢັ້ງ, ດັ່ງນັ້ນ, ພວກເຮົາຈຶ່ງສະແດງຄວາມຮັກຕໍ່ພຣະອົງ. ແລະຄວາມຮັກທີ່ເຮົາມີຕໍ່ພຣະອົງນັ້ນໄດ້ຍຶດບ່ຽວຄວາມໄວ້ວາງໃຈແລະການເຊື່ອຟັງຂອງພວກເຮົາ.

ພຣະບັນຍັດສອງ 6:4-6 ຖືວ່າເປັນຂໍ້ນຶ່ງທີ່ສຳຄັນທີ່ສຸດໃນພຣະຄັມພີ. ຂໍ້ພຣະຄຳເຫຼົ່ານີ້ໄດ້ເອີ້ນວ່າ *ເຊີມາ* ຈາກພາສາເຮັບເຣີແມ່ນຄຳວ່າ *ໄດ້ຍິນ*, ຊຶ່ງເປັນຄຳທຳອິດໃນປໂຍກນີ້. ເມື່ອໂມເຊເລີ້ມຕົ້ນຂໍ້ທີ່ສີ່ໂດຍກ່າວວ່າ "ຈົ່ງຟັງ, ອິສຣາເອັນເອີຍ," ທ່ານໄດ້ເນັ້ນໜັກເຖິງຄວາມສຳຄັນຂອງຂໍ້ຄວາມເຫຼົ່ານີ້. ເມື່ອຮອດສມັຍຂອງພຣະເຢຊູຄົນຢິວທີ່ສັດຊື່ໄດ້ເລົ່າຂໍ້ນີ້ຫຼາຍເທື່ອຕໍ່ມື້. ໃນທຸກມື້ນີ້ພວກເຮົາສາມາດຊອກຫາແຮງຈູງໃຈທີ່ຈະເຊື່ອຟັງພຣະເຈົ້າໃນພູເຂົາຊີນາຍ. ໂມເຊໄດ້ໃຫ້ຕົວຢ່າງຂອງແບບດັ້ງເດີມ (ການດຳເນີນຊີວິດທີ່ຖືກຕ້ອງ).

- **ຄວາມເຊື່ອທີ່ຖືກຕ້ອງ.** ໂມເຊເຕືອນປະຊາຊົນວ່າພຣະເຈົ້າຂອງພວກເຈົ້າແມ່ນໃຜ. ພຣະອົງບໍ່ຄືກັບພຣະເຈົ້າຂອງຊາວການາອານທີ່ເຊື່ອພະເຈົ້າຫຼາຍອົງຊຶ່ງອາສັຍຢູ່ໃນດິນແດນທີ່ຊາວອິສຣາເອັນກຳລັງຈະເຂົ້າຄອບຄອງ. ແທນທີ່ຈະ, "ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຮົາ, ພຣະອົງເປັນອົງພຣະຜູ້ເປັນເຈົ້າພຽງຜູ້ດຽວ" (ຂໍ້ 4). ໃນປໂຍກທີ່ງ່າຍນີ້, ໂມເຊໄດ້ກຳນົດແບບດັ້ງເດີມທີ່ເໝາະສົມ (ຄວາມເຊື່ອທີ່ຖືກຕ້ອງ). ໂມເຊໄດ້ເນັ້ນເຖິງຄວາມເປັນເອກກະພາບຂອງພຣະເຈົ້າແລະຄວາມພິເສດຂອງພຣະອົງ.
- **ການດຳເນີນຊີວິດທີ່ຖືກຕ້ອງ.** ໂມເຊຍັງສະແດງໃຫ້ພວກເຂົາເຫັນການປະພຶດທີ່ຖືກຕ້ອງ (ການດຳເນີນຊີວິດທີ່ຖືກຕ້ອງ) (ໃນຂໍ້ 5). ພວກເຮົາພົບເຫັນພຽງແຕ່ການຕອບສນອງທີ່ເໝາະສົມກັບຜູ້ທີ່ພຣະເຈົ້າເປັນ: "ຈົ່ງຮັກພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດຈິດ, ດ້ວຍສຸດໃຈ, ແລະດ້ວຍສຸດກຳລັງຂອງເຈົ້າ," ຄວາມຮັກຄືການຕອບສນອງດ້ວຍສຸດໃຈຂອງພວກເຮົາຕໍ່ຜູ້ທີ່ພຣະເຈົ້າເປັນ; ຄວາມຮັກຕໍ່ພຣະອົງແມ່ນການສຸມໃຈໃສ່ທັງໝົດຂອງພວກເຮົາ.

ທຸກຂົງເຂດຂອງຊີວິດໃນປະຈຸບັນກາຍເປັນໂອກາດສຳລັບການນະມັສການໂດຍຜ່ານການໄວ້ວາງໃຈແລະການເຊື່ອຟັງ, ແລະມັນເປັນຄວາມຮັກແລະການອຸທິດຕົນທີ່ບັງຄັບໃຫ້ພວກເຮົາໄວ້ວາງໃຈແລະເຊື່ອຟັງພຣະອົງ.

## 3 ພຣະບັນຍັດສອງ 6:6-9.

*6–7 ຢ່າລືມສິ່ງທີ່ຂ້າພະເຈົ້າໄດ້ສັ່ງພວກທ່ານໃນມື້ນີ້ ໃຫ້ບອກສອນລູກຫລານດ້ວຍ ເມື່ອພວກທ່ານຢູ່ໃນເຮືອນຫລືອອກໜີໄປກໍດີ ເມື່ອເຮັດວຽກ ຫລືຢຸດພັກກໍດີ ໃຫ້ທ່ອງຈຳຄຳສັ່ງນີ້. 8–9 ໃຫ້ຕິດມັນໄວ້ຢູ່ແຂນ ແລະເທິງໜ້າຜາກ ພ້ອມທັງໃຫ້ຂຽນໄວ້ຕາມປະຕູເຮືອນຂອງທ່ານດ້ວຍ ເພື່ອເປັນສິ່ງເຕືອນໃຈ.*

ເຖິງແມ່ນວ່າພຣະເຢຊູໄດ້ຢືນຢັນວ່າເປັນນຶ່ງໃນພຣະບັນຍັດທີ່ເປັນຂໍ້ໃຫ່ຍທີ່ສຸດ, ພຣະອົງໄດ້ເພີ້ມອີກຂໍ້, ພຣະອົງຊົງກ່າວວ່າ, "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" (ມັດທາຍ 22:39). ເມື່ອເຮົາໄດ້ຮຽນຮູ້ປໂຍດຂອງພຣະຄຳພຣະເຈົ້າສຳລັບຕົວເຮົາເອງ, ພວກເຮົາກໍຢາກແບ່ງປັນໃຫ້ຄົນອື່ນໄດ້ຮັບປະສົບການກັບປໂຍດຈາກພຣະເຈົ້າເຊັ່ນກັນ. ຖ້າຄວາມຮັກຕໍ່ພຣະເຈົ້າບັງຄັບເຮົາໃຫ້ ວາງໃຈແລະເຊື່ອຟັງພຣະຄຳຂອງພຣະອົງ, ແລ້ວຄວາມຮັກຕໍ່ຄົນອື່ນບັງຄັບເຮົາໃຫ້ແບ່ງປັນພຣະຄຳຂອງພຣະເຈົ້າໃນທຸກໂອກາດທີ່ເຮົາມີ. ເພື່ອສື່ສານພຣະຄຳຂອງພຣະເຈົ້າຢ່າງມີປະສິດຕິພາບ, ໂມເຊກ່າວຄຳເຫຼົ່ານີ້ "ຕ້ອງຢູ່ໃນໃຈຂອງພວກເຮົາ" (ຂໍ້6). ເວົ້າງ່າຍໆ, ພວກເຮົາຄວນຈະມີຫົວໃຈທີ່ເຕັ້ນໄປຫາພຣະຄຳຂອງພຣະເຈົ້າ. ອັນນີ້ຊີ້ໃຫ້ເຫັນຄຸນຄ່າຂອງການຈື່ຈຳພຣະຄັມພີ. "ຂ້ານ້ອຍໄດ້ຮັກສາຖ້ອຍຄຳຂອງພຣະອົງໄວ້ໃນໃຈເພື່ອວ່າຂ້ານ້ອຍຈະບໍ່ເຮັດຜິດບາບຕໍ່ພຣະອົງ" (ເພງສັຣເສີນ 119:11). ຍິ່ງມີພຣະຄຳຂອງພຣະເຈົ້າຢູ່ໃນໃຈຂອງເຮົາຫຼາຍປານໃດ. ຄົນອື່ນໆທີ່ຈະມີໂອກາດໄດ້ຍິນພຣະຄຳຂອງພຣະເຈົ້າຈາກປາກຂອງເຮົາຫຼາຍຂຶ້ນ. ພວກເຮົາຕ້ອງຈື່ຈຳຂໍ້ສຳຄັນໃນ ພຣະຄຳຂອງໂມເຊ: ພວກເຮົາຕ້ອງຮັກພຣະເຈົ້າດ້ວຍທຸກໆສ່ວນຂອງຊີວິດຂອງພວກເຮົາແລະແບ່ງປັນພຣະຄຳຂອງພຣະເຈົ້າໃນທຸກສ່ວນຂອງຊີວິດຂອງພວກເຮົາເໝືອນກັນ. ບໍ່ວ່າຈະເປັນບ່ອນໃດກໍຕາມທີ່ພວກເຮົາໄປແມ່ນໂອກາດທີ່ຈະສື່ສານພຣະຄຳຂອງພຣະເຈົ້າກັບທຸກຄົນໃນດ້ານໃດດ້ານນຶ່ງ. ຈົ່ງພິຈາລະນາເບິ່ງວິທີຕໍ່ໄປນີ້ເພື່ອອາດຈະຊ່ວຍທ່ານໃຫ້ໄດ້ກ່າວຄວາມຈິງຂອງພຣະເຈົ້າ.

- ໃຊ້ຂໍ້ພຣະຄັມພີທີ່ເຫັນວ່າສຳຄັນ. ຈະຂຽນຫຼືພິມອອກ, ແລະວາງໃນສະຖານທີ່ສຳຄັນອ້ອມຂ້າງເຮືອນຂອງທ່ານ.
- ແບ່ງປັນຂໍ້ພຣະຄັມພີໃຫ້ກຳລັງໃຈກັບໝູ່ເພື່ອນ, ເພື່ອນຮ່ວມງານ, ຫຼືຄົນໃດຄົນນຶ່ງທີ່ທ່ານໄດ້ມີໂອກາດສົນທະນານຳພວກເຂົາ.
- ຂໍໃຫ້ໝູ່ເພື່ອນບາງຄົນທີ່ຍັງບໍ່ທັນຮູ້ຈັກກັບພຣະເຢຊູໄດ້ອ່ານພຣະຄັມພີກັບທ່ານ.

ຄວາມບາບໄດ້ເຮັດໃຫ້ຄົນເຮົາໝົດຫວັງແລະທຸກໂສກ. ສ່ວນທ່ານແລະຂ້າພະເຈົ້າມີພຣະຄຳຂອງພຣະເຈົ້າຢູ່ໃນການກຳຈັດຄວາມບາບ

ແລະຄວາມທຸກໂສກເຫຼົ່ານີ້-ແລະພວກເຮົາມີພຣະຄຳນັ້ນຢູ່ຢ່າງອຸດົມສົມບູນ. ພວກເຮົາໄດ້ຮັບການລ້ຽງດູຢ່າງດີ ເພື່ອຊ່ວຍໃຫ້ຄົນອື່ນທີ່ກຳລັງຊອກຫາອາຫານທີ່ເຂົາປາຖນາຢາກຊອກຫານັ້ນ. ຈົ່ງໃຫ້ຄວາມຮັກຂອງພຣະເຈົ້າກະຕຸ້ນຈິດໃຈຂອງພວກເຮົາໃຫ້ສົ່ງຕໍ່ອາຫານແຫ່ງຊີວິດນີ້ເທີດ.

## ນຳໃຊ້ໃນຊີວິດ

ທ່ານສາມາດສື່ສານສົ່ງຕໍ່ພຣະຄຳຂອງພຣະເຈົ້າໄດ້ຫຼາຍວິທີ? ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- ***ການສື່ສານພາຍໃນ.*** ທ່ານມີຄວາມກັງວົນຢູ່ໃນຈຸດໃດຈຸດນຶ່ງເປັນພິເສດບໍ? ຕໍ່ສູ້ກັບຄວາມບາບໂດຍສະເພາະບໍ? ຫຼືບາງທີທ່ານຕ້ອງຈື່ຄຳສັນຍາອັນນຶ່ງຂອງພຣະເຈົ້າບໍ? ກຳນົດຂໍ້ພຣະຄັມພີທີ່ກ່ຽວຂ້ອງ. ຂຽນມັນລົງ, ແລະເອົາຂໍ້ພຣະຄຳນັ້ນໄປກັບທ່ານໃນທຸກບ່ອນທຸກທີ່ທີ່ທ່ານໄປໃນອາທິດນີ້.

- ***ການສື່ສານກັບເບື້ອງເທິງ.*** ໃນຂນະທີ່ທ່ານອ່ານພຣະຄັມພີເປັນປະຈຳ, ເອົາຂໍ້ພຣະຄັມພີຂອງພຣະເຈົ້າປົນເຂົ້າໃນຄຳອະທິຖານຂອງທ່ານ. ເມື່ອທ່ານເຮັດສິ່ງນີ້, ທ່ານຈະໄດ້ຮູ້ວິທີທີ່ຈະຕິດຕໍ່ສື່ສານພຣະຄຳຂອງພຣະເຈົ້າກັບຄືນໄປຫາພຣະອົງເປັນເໝືອນການເຂົ້ານະມັສການ.

- ***ການສື່ສານພາຍນອກ.*** ຂໍໃຫ້ໃຜຜູ້ນຶ່ງອ່ານພຣະຄັມພີກັບທ່ານຫຼືເຂົ້າຮ່ວມສຶກສາພຣະຄັມພີ.

ຈື່ຂໍ້ມູນການແນະນຳຂອງພະນັກງານການບິນບໍ? ຂໍໃຫ້ພວກເຮົາຮັກພຣະເຈົ້າໂດຍການນຳໃຊ້ພຣະຄຳຂອງພຣະອົງເຂົ້າກັບການດຳເນີນຊີວິດຂອງພວກເຮົາ. ແລະໃຫ້ເຮົາຮັກຄົນອື່ນໂດຍການສະແດງໃຫ້ເຫັນວິທີການເຮັດເຊັ່ນດຽວກັນ!

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**